ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ..1218.../ອຄ.ທຄວ

ນະຄອນຫຼວງວຽງຈັນ, ວັນທີ..09..ກໍລະກົດ..2014

# ແຈ້ງການ

ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ;
- ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ;
- ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ.

ເລື່ອງ: ແບບຟອມໃບຢັ້ງຢືນທີ່ຕັ້ງສຳນັກງານຂອງວິສາຫະກິດ ຫລືສາຂາ (ນິຕິບຸກຄົນຕ່າງປະເທດ)

ເພື່ອເຮັດໃຫ້ການຕິດຕາມ ກວດກາກ່ຽວກັບທີ່ຕັ້ງສຳນັກງານຂອງວິສາຫະກິດ ແລະ ສາຂາ (ນິຕິບຸກຄົນຕ່າງປະເທດ) ມີຄວາມສະດວກ, ເປັນລະບົບ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ ດັ່ງນີ້:

1. ການແຈ້ງຂຶ້ນທະບຽນວິສາຫະກິດ, ການຍ້າຍທີ່ຕັ້ງສຳນັກງານຂອງວິສາຫະກິດ ຫລື ສາຂາວິສາຫະກິດ (ນິຕິບຸກຄົນຕ່າງປະເທດ) ຕ້ອງມີໃບຢັ້ງຢືນທີ່ຕັ້ງສຳນັກງານ ຈາກບ້ານທີ່ວິສາຫະກິດ ຫລື ສາຂານັ້ນ ຕັ້ງຢູ່ (ແບບຟອມໃບຢັ້ງຢືນທີ່ຕັ້ງສຳນັກງານຂອງວິສາຫະກິດ ຫລື ສາຂາວິສາຫະກິດ (ນິຕິບຸກຄົນຕ່າງປະເທດ) ຄັດຕິດມາພ້ອມນີ້);

2. ວິສາຫະກິດ ຫລື ສາຂາ (ພາຍໃນ ແລະ ຕ່າງປະເທດ) ທີ່ມີທີ່ຕັ້ງສຳນັກງານຂອງຕົນຢູ່ເມືອງ ຫລື ເທດສະບານໃດ ຕ້ອງອັດສຳເນົາເອກະສານໃບທະບຽນວິສາຫະກິດ ຫລື ໃບຢັ້ງຢືນສາຂາ ສົ່ງໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ຫລື ເທດສະບານນັ້ນ ເພື່ອຊາບ ແລະ ຄຸ້ມຄອງ;

3. ໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ຫລື ເທດສະບານ:

- ຄຸ້ມຄອງ ແລະ ຕິດຕາມບັນດາວິສາຫະກິດ ຫລື ສາຂາ (ພາຍໃນ ແລະ ຕ່າງປະເທດ) ທີ່ມີທີ່ຕັ້ງສຳນັກງານຢູ່ ເມືອງ ຫລື ເທດສະບານ ຂອງຕົນ;
- ລາຍງານໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດທີ່ຂຶ້ນທະບຽນວິສາຫະກິດ ຫລື ອອກໃບຢັ້ງຢືນສາຂາໃຫ້ທຸກຄັ້ງ ທີ່ວິສາຫະກິດ ຫລື ສາຂາ ຍ້າຍທີ່ຕັ້ງສຳນັກງານ ຫລື ສາຂາ ອອກຈາກ ຫລື ເຂົ້າມາຕັ້ງຢູ່ໃນເມືອງ, ເທດສະບານ ຂອງຕົນ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

165

ວສະຫວາດ ສະແຫວງສຶກສາ